**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4168/ກປ

ນະຄອນຫຼວງວຽງຈັນ, ວັນທີ 07 AUG 2024

## ຄຳສັ່ງ

## ກ່ຽວກັບ ການຊຸກຍູ້, ສົ່ງເສີມ ຂະບວນການລ້ຽງງົວ ແລະ ຄວາຍ ເພື່ອສົ່ງອອກໄປ ສປ ຈີນ

**ເຖິງ:** - ທ່ານ ຫົວໜ້າ ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ທ່ານ ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍ ການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 5403/ກລປ, ລົງວັນທີ 05 ສິງຫາ 2024;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ລົງວັນທີ 06 ສິງຫາ 2024.

ເພື່ອສືບຕໍ່ຈັດຕັ້ງປະຕິບັດ ສັນຍາ ກ່ຽວກັບ ການກັກກັນ ແລະ ມາດຕະຖານດ້ານສຸຂະພາບ ສຳລັບສັດໃຫຍ່ ຈາກ ສປປ ລາວ ທີ່ຈະສົ່ງອອກໄປ ສປ ຈີນ (ສະບັບປັບປຸງ) ລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ອົງການບໍລິຫານພາສີ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ສະບັບລົງວັນທີ 29 ພະຈິກ 2022 ແລະ ເພື່ອເປັນການຊຸກຍູ້ ສົ່ງເສີມ ຂະບວນການລ້ຽງສັດໃຫຍ່ ປະເພດ ງົວ ແລະ ຄວາຍ ເປັນສິນຄ້າ ໃນຂອບເຂດທົ່ວປະເທດ ໃຫ້ເປັນຂະບວນຟົດຟື້ນ, ກວ້າງຂວາງ ແລະ ສາມາດຮັບປະກັນ ດ້ານປະລິມານ ແລະ ຄຸນນະພາບ ຕາມມາດຕະຖານ ການສົ່ງອອກສັດໃຫຍ່ ປະເພດ ງົວ-ຄວາຍ ໄປ ສປ ຈີນ.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:

1. ໃຫ້ ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານ ສົມທົບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ເພື່ອຈັດຕັ້ງໂຄສະນາເຜີຍແຜ່ ໃຫ້ການຈັດຕັ້ງພາກລັດ, ເອກະຊົນ, ຊາວກະສິກອນ ແລະ ຜູ້ປະກອບການ ໃນຂອບເຂດທົ່ວປະເທດ ຮັບຮູ້ຢ່າງຈະແຈ້ງ ແລະ ເລິກເຊິ່ງ ກ່ຽວກັບ ມາດຕະຖານສິນຄ້າ ງົວ-ຄວາຍ ທີ່ຈະສົ່ງອອກໄປ ສປ ຈີນ ຄື: ງົວ-ຄວາຍ ຕ້ອງມີນ້ຳໜັກ 350 ກິໂລກຣາມ/ໂຕ ຂຶ້ນໄປ, ອາຍຸ ບໍ່ເກີນ 4 ປີ ໂດຍບໍ່ຈຳກັດສາຍພັນ;

2. ໃຫ້ບັນດາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການໃນການວາງແຜນ ແລະ ຊຸກຍູ້ສົ່ງເສີມ ປະຊາຊົນ ແລະ ຜູ້ປະກອບການລ້ຽງສັດ ໃຫ້ສຸມໃສ່ການລ້ຽງງົວ-ຄວາຍ ເພື່ອເປັນສິນຄ້າໃນທຸກຮູບແບບຢູ່ພາຍໃນແຂວງຂອງຕົນ ໂດຍມີການກຳນົດເຂດລ້ຽງງົວ, ຄວາຍ ຕາມຄວາມເໝາະສົມ ຂອງແຕ່ລະທ້ອງຖິ່ນ ພ້ອມທັງສົ່ງເສີມການລ້ຽງສັດແບບເປັນຟາມທີ່ໄດ້ມາດຕະຖານ ໃຫ້ນັບມື້ນັບເພີ່ມຂຶ້ນ ໂດຍການນຳໃຊ້ເຕັກນິກວິຊາການຕິດພັນກັບການສ້າງເຂດປອດພະຍາດສັດ (ງົວ-ຄວາຍ) ຢູ່ແຕ່ລະທ້ອງຖິ່ນ ແລະ ນຳໃຊ້ທຸກທ່າແຮງຂອງຕົນທີ່ມີ;
3. ໃຫ້ ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ບັນດາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສຸມໃສ່ການສົ່ງເສີມປູກຜືດອາຫານສັດຊະນິດພັນຕ່າງໆ ເປັນຕົ້ນ ຫຍ້າຣູຊີ, ກີນີ້, ມູລາໂຕ, ເນເປຍ, ຈູນຊາວ, ຖົ່ວສະຕາຍໄລ ແລະ ພືດອາຫານສັດອື່ນໆ ເພື່ອໃຫ້ເປັນອາຫານສັດທີ່ມີຄຸນນະພາບ. ຄຽງຄູ່ກັນນັ້ນ, ກໍ່ໃຫ້ມີການຊຸກຍູ້ສົ່ງເສີມການປູກ ແລະ ນຳໃຊ້ມັນຕົ້ນ, ສາລີ, ຖົ່ວເຫຼືອງ ແລະ ພືດທີ່ມີທາດໂປຣຕີນສູງ ເພື່ອຜະລິດອາຫານປະສົມ ແລະ ຜະລິດອາຫານເສີມ ໃຫ້ງົວ-ຄວາຍ; ຊຸກຍູ້ສົ່ງເສີມປະຊາຊົນ ໃຫ້ນຳໃຊ້ສິ່ງເສດເຫຼືອຈາກການປູກຝັງ ແລະ ປຸງແຕ່ງກະສິກຳ ເຊັ່ນ: ໃບມັນຕົ້ນ, ສິ່ງເສດເຫຼືອຈາກການເກັບກ່ຽວສາລີ ແລະ ຖົ່ວເຫຼືອງ, ຍອດອ້ອຍ, ກາກນ້ຳຕານ, ກາກເຫຼົ້າ, ກາກເບຍ ເພື່ອມາເປັນວັດຖຸດິບປະສົມໃສ່ສູດອາຫານໃຫ້ສັດກິນ. ພ້ອມດຽວກັນນັ້ນ, ກໍ່ຕ້ອງໄດ້ຊຸກຍູ້ສົ່ງເສີມ ແລະ ຖ່າຍທອດເຕັກນິກ ການເກັບຮັກສາອາຫານສັດ ໄວ້ໃຫ້ສັດກິນໃນຍາມທີ່ຂາດແຄນອາຫານ ດ້ວຍວິທີການເຮັດຫຍ້າແຫ້ງ, ຫຍ້າໝັກ, ເຟືອງໝັກ, ກ້ອນແຮ່ທາດ ແລະ ອາຫານເສີມທີ່ຈຳເປັນອື່ນໆ;
4. ໃຫ້ ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ສືກສາຄົ້ນຄວ້າ ກ່ຽວກັບ ການປັບປຸງ ແລະ ຂະຫຍາຍພັນງົວ, ຄວາຍ ທີ່ມີຄຸນນະພາບ ສາມາດຕອບສະໜອງຕາມມາດຕະຖານຄວາມຕ້ອງການ ຂອງປະເທດຄູ່ຄ້າເພື່ອສະໜອງແນວພັນງົວ, ຄວາຍ ໃຫ້ແກ່ຜູ້ປະກອບການ ເອົາໄປລ້ຽງເປັນສິນຄ້າສົ່ງອອກ;
5. ໃຫ້ ກົມລ້ຽງສັດ ແລະ ການປະມົງ ສົມທົບກັບບັນດາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສືບຕໍ່ສ້າງ ແລະ ຂະຫຍາຍຕາໜ່າງສັດຕະວະແພດ ຢູ່ຂັ້ນບ້ານໃນທົ່ວປະເທດໃຫ້ຫຼາຍຂຶ້ນ ເພື່ອຍົກລະດັບການເຝົ້າລະວັງ, ຕິດຕາມສະພາບການລະບາດຂອງພະຍາດສັດ ແລະ ສັກຢາກັນພະຍາດສັດ ຕາມລະດູການ ໃຫ້ສັດລ້ຽງຂອງປະຊາຊົນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ. ພ້ອມກັນນັ້ນ, ກໍ່ໃຫ້ສຸມໃສ່ ປັບປຸງ, ກໍ່ສ້າງໂຄງລ່າງພື້ນຖານ ແລະ ບຸກຄະລາກອນ ໃນດ້ານການວິເຄາະວິໄຈພະຍາດສັດ ໃຫ້ມີຄວາມວ່ອງໄວ ແລະ ມີປະສິດທິຜົນ;
6. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສຳຫຼວດເກັບກຳຂໍ້ມູນສະຖິຕິ ຜູ້ລ້ຽງງົວ, ຄວາຍ ແລະ ຈຳນວນປະຊາກອນ ງົວ, ຄວາຍ ທີ່ມີຢູ່ໃນແຂວງຂອງຕົນ ໃນແຕ່ລະໄລຍະ ເພື່ອຄຸ້ມຄ່ຽງຄວາມສາມາດໃນການຜະລິດ ແລະ ການສະໜອງ ເພື່ອການບໍລິໂພກ ຢູ່ພາຍໃນທ້ອງຖິ່ນຂອງຕົນ ແລະ ວາງແຜນພັດທະນາການລ້ຽງສັດດັ່ງກ່າວ ເພື່ອເປັນສິນຄ້າສົ່ງອອກ ຢ່າງເປັນລະບົບ;
7. ໃຫ້ ກົມລ້ຽງສັດ ແລະ ການປະມົງ ສ້າງຖານຂໍ້ມູນ ກ່ຽວກັບ ຟາມລ້ຽງສັດ ເປັນຕົ້ນແມ່ນ ຊື່ຟາມ, ຈຸດທີ່ຕັ້ງຂອງຟາມ, ຊະນິດສັດ ແລະ ແນວພັນສັດທີ່ລ້ຽງ, ຈຳນວນສັດລ້ຽງ ແລະ ອື່ນໆ ທີ່ຈຳເປັນ ພ້ອມທັງລົງກວດກາ ແລະ ຢັ້ງຢືນມາດຕະຖານຟາມ ຕາມມາດຕະຖານການປະຕິບັດງານທີ່ດີ ສຳລັບຟາມລ້ຽງງົວ ແລະ ຄວາຍ ຂອງ ສປປ ລາວ (ຕາມລະຫັດມາດຕະຖານ: ມກປ-ລປ-2022-000017) ສະບັບລົງວັນທີ 06 ພຶດສະພາ 2022. ພ້ອມນັ້ນ, ກໍໃຫ້ດຳເນີນການຂຶ້ນທະບຽນພິມສັດ ໃຫ້ແກ່ສັດລ້ຽງຢູ່ໃນຟາມ ເພື່ອຄວາມສະດວກໃນການຄຸ້ມຄອງ ແລະ ໃຫ້ສາມາດກວດຄືນປະຫວັດຂອງສັດ ໃນເວລາເຄື່ອນຍ້າຍ ແລະ ສົ່ງອອກຂາຍໄປຕ່າງປະເທດ;
8. ໃຫ້ ກົມແຜນການ ແລະ ການຮ່ວມມື ປະສານສົມທົບກັບ ກົມລ້ຽງສັດ ແລະ ການປະມົງ ແລະ ພາກສ່ວນກ່ຽວຂ້ອງ ຊຸ້ນຂ້ຽວປະສານງານກັບ ອົງການບໍລິຫານພາສີ ແຫ່ງ ສາທາລະນະລັດ ປະຊາຊົນຈີນ ເພື່ອເຈລະຈາ ແລະ ກຳນົດເອົາ

ຟາມລ້ຽງງົວ-ຄວາຍ ທີ່ໄດ້ມາດຕະຖານປະຕິບັດງານທີ່ດີ ສຳລັບຟາມລ້ຽງງົວ-ຄວາຍ ຂອງ ສປປ ລາວ ໃຫ້ຖືເປັນຟາມລ້ຽງທອມສັດ (ເຂດທ້ອນໂຮມ 45 ວັນ) ແລະ ປັບໄລຍະເວລາ ໃນການກັກກັນສັດຢູ່ສູນກັກກັນ ຈາກ 30 ວັນ ໃຫ້ຢູ່ໃນລະຫວ່າງ 7-14 ວັນ ເພື່ອໃຫ້ສອດຄ່ອງກັບລະບຽບຂອງອົງການສຸຂະພາບສັດສາກົນ (WOAH);

9. ຫ້າມບໍ່ໃຫ້ ກົມລ້ຽງສັດ ແລະ ການປະມົງ ອະນຸຍາດນຳເຂົ້າ ງົວ, ຄວາຍ ເພື່ອສົ່ງອອກໄປຕ່າງປະເທດ ໂດຍທີ່ບໍ່ໄດ້ຜ່ານການລ້ຽງ ຢູ່ ສປປ ລາວ. ອະນຸຍາດໃຫ້ນຳເຂົ້າ ງົວ-ຄວາຍ ສຳລັບເປັນພໍ່ພັນ-ແມ່ພັນ ແລະ ງົວ, ຄວາຍ ອາຍຸ 12 ເດືອນ ລົງມາ ທີ່ມີໂຄງຮ່າງເໝາະສົມມາລ້ຽງທອມ ເພື່ອເພີ່ມມູນຄ່າໃຫ້ໄດ້ຢ່າງຕ່ຳ 40% ຂຶ້ນໄປ ຈຶ່ງຈະອະນຸຍາດໃຫ້ສົ່ງອອກ, ໂດຍ ກະຊວງກະສິກຳ ແລະ ປ່າໄມ້ ຈະເປັນຜູ້ອະນຸຍາດ ອອກໂກຕ້າ ໃຫ້ນຳເຂົ້າ ງົວ, ຄວາຍ ເພື່ອມາລ້ຽງທອມໃຫ້ແກ່ບັນດາຟາມ ທີ່ມີໃບຮັບຮອງມາດຕະຖານຟາມ ຂອງກົມລ້ຽງສັດ ແລະ ການປະມົງ ອອກໃຫ້ເທົ່ານັ້ນ;

10. ໃຫ້ ກົມລ້ຽງສັດ ແລະ ການປະມົງ ສົມທົບກັບບັນດາ ໂຄງການ ແລະ ຜູ້ປະກອບການ ກະກຽມສ້າງເງື່ອນໄຂໃຫ້ແກ່ການປຸງແຕ່ງຜະລິດຕະພັນສັດ ດ້ວຍການຊຸກຍູ້ສົ່ງເສີມ ການສ້າງໂຮງງານຂ້າສັດ ທີ່ໄດ້ມາດຕະຖານສາກົນ ເພື່ອແປຮູບຜະລິດຕະພັນສັດເປັນຊີ້ນສ່ວນ ແລະ ຊີ້ນແຊ່ແຂງ ເພື່ອສະໜອງພາຍໃນ ແລະ ສົ່ງອອກຕ່າງປະເທດ;

11. ໃຫ້ ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງພັນຂະຫຍາຍ ຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ ພ້ອມທັງມີການສະຫຼຸບລາຍງານ ແລະ ຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;

12. ຄຳສັ່ງສະບັບນີ້ ໃຊ້ປ່ຽນແທນ ຄຳສັ່ງສະບັບເລກທີ 3789/ກປ, ລົງວັນທີ 18 ກໍລະກົດ 2024 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ລິນຄຳ ດວງສະຫວັນ

**ບ່ອນນຳສົ່ງ**

| | | |
|---|---|---|
| 1. ລມຕ/ຮລມຕ ກປ | ທ່ານລະ | 01 ສະບັບ (ເພື່ອຊີ້ນຳ); |
| 2. ຫ້ອງການ | | 01 ສະບັບ; |
| 3. ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບ 2 | | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ); |
| 4. ພະແນກ ກປ ແຂວງ, ນະຄອນຫຼວງວຽງຈັນ | | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ); |
| 5. ພະແນກຄົ້ນຄວ້າ ແລະ ສັງລວມ | | 01 ສະບັບ (ເພື່ອຕິດຕາມ); |
| 6. ພະແນກເລຂານຸການ ແລະ ພິທີການ | | 01 ສະບັບ (ເກັບມ້ຽນ). |